# ແຂມ (ຟອຍກວາດ)

## ໃນແຂວງ ຫົວພັນ

*ແຂມ ເປັນເຄື່ອງປ່າຂອງດົງທີ່ສຳຄັນຊະນິດໜຶ່ງໃນ ປະເທດລາວ ຖ້າເບິ່ງໃນແງ່ຂອງຍອດຂາຍປະຈຳແຕ່ລະປີ. ຕະຫລາດແຂມໃຫຍ່ ຂອງ ລາວ ແມ່ນຢູ່ ປະເທດຫວຽດນາມ,ໄທ ແລະ ຈີນ ຊຶ່ງສ່ວນຫລາຍແລ້ວແມ່ນຂາຍອອກເປັນວັດຖຸດິບ ແທນທີ່ຈະເປັນຜະລິດຕະພັນຟອຍກວາດສຳເລັດຮູບ. ການຜະລິດຟອຍກວາດສຳເລັດຮູບ ເປັນສິ່ງສຳຄັນ ແລະ ໄດ້ມີການເຕີບໃຫຍ່ຂະຫຍາຍໂຕຂຶ້ນ.*









## ການຜະລິດ:

- ການຜະລິດແຂມໄດ້ຂະຫຍາຍຕົວອອກຢ່າງກ້ວາງຂວາງໃນແຂວງຫົວພັນຊຶ່ງຜົນຜະລິດຈຳນວນຫລວງຫລາຍແມ່ນໄດ້ມາຈາກ ເມືອງຊ້ອນ, ເມືອງຫົວເມືອງ ແລະ ເມືອງວຽງໄຊ.
- ຕົ້ນແຂມ ແມ່ນເກີດຂຶ້ນໂດຍທຳມະຊາດ ໃນພື້ນທີ່ດິນໄຮ່ເກົ່າໃນເຂດພູດອຍ ແລະ ປະຊາຊົນໃນເຂດພູດອຍໄດ້ເກັບກ່ຽວເອົາແຂມດັ່ງກ່າວ.
- ປະຈຸບັນ ປະຊາຊົນຍັງບໍ່ມີສວນປູກແຂມ, ມີແຕ່ເກັບແຂມຕາມ ທຳມະຊາດ.
- ແຂວງຫົວພັນ ເກັບກູ້ ແລະ ຂາຍແຂມອອກໃນແຕ່ລະປີ ປະມານ 81.265 ໂຕນ.

## ການຕະຫລາດ

- ຜູ້ເກັບຊື້ແຂມຢູ່ລາວ ສ່ວນຫຼາຍແມ່ນມາຈາກ ປະເທດຫວຽດນາມ, ໄທ ແລະ ຈີນ.
- ມີພໍ່ຄ້າຄົນກາງທີ່ເປັນນາຍໜ້າໃນການເກັບຊື້ຢູ່ພາຍໃນທ້ອງຖິ່ນຈຳນວນ 5 ຄົນ, ຫວຽດນາມ 2 ຄົນ, ລາວ 3 ຄົນ.
- ປະຊາຊົນຂາຍໂດຍກົງຢູ່ໜ້າເຮືອນ, ຢູ່ຕະຫລາດທ້ອງຖິ່ນ ແລະ ຢູ່ໃນຕົວເມືອງ ໃຫຍ່.
- ລາຄາຂາຍແຂມໃນແຕ່ລະປີ ແມ່ນມີການປ່ຽນແປງ ໂດຍອີງຕາມຄຸນນະພາບ, ການຜະລິດລວມ ແລະ ກຳນົດເວລາ.
- ລາຄາແຂມດິບ 2,000 - 2,200 ກີບຕໍ່ໜຶ່ງກິໂລ. ແຂມແຫ້ງ 5,000 - 10,000 ກີບຕໍ່ໜຶ່ງກິໂລ.
- ລາຄາຟອຍກວາດ ຂາຍ 10,000 ຫາ 15,000 ກີບ ຕໍ່ ໜຶ່ງກ້ານ.

## ໂອກາດ:

- ການຂະຫຍາຍເນື້ອທີ່ການຜະລິດແຂມຕາມທຳມະຊາດໂດຍວິທີການໃຫ້ບ້ານມີແຜນການປົກປັກຮັກສາປ່າແຂມທຳມະຊາດ.
- ການຂະຫຍາຍສວນປູກແຂມ ເປັນລາຍຄອບຄົວ ໂດຍມີການຊ່ວຍເຫລືອທາງດ້ານເຕັກນິກວິຊາການ.
- ສ້າງກຸ່ມຜະລິດ, ສ້າງຄວາມເຂັ້ມແຂງໃນການຜະລິດແຂມ ແລະ ການຕະຫລາດ.
- ສ້າງກຸ່ມຜະລິດຟອຍ, ສ້າງຄວາມເຂັ້ມແຂງໃນການເຮັດຟອຍ ແລະ ຂະຫຍາຍການພົວພັນການຕະຫລາດທ້ອງຖິ່ນໃຫ້ມີຄວາມເຂັ້ມແຂງ.
- ຍົກລະດັບການອອກແບບຟອຍໂດຍອີງຕາມຜົນຂອງການສຶກສາດ້ານການຕະຫຼາດ.

Schweizerische Eidgenossenschaft
Confédération suisse
Confederazione Svizzera
Confederaziun svizra

Swiss Agency for Development
and Cooperation SDC

NAFRI

TABI
The Agro-Biodiversity Initiative (TABI)